Minnesota Department of Health

# ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ສະຖານພະຍາບານ NURSING HOME ແລະ ສະຖານພະຍາບານຄົນສະລາແລະຄົນພິການ BOARDING CARE HOME ຂອງຣັຖມິນນີໂຊຕາ

## ເຈດຈຳນົງທາງນິຕິບັນຍັດ

ມັນແມ່ນເຈດຈຳນົງຂອງສະພານິຕິບັນຍັດແລະ ຈຸດປະສົງຂອງຄຳຖະແຫຼງການນີ້ ເພື່ອສົ່ງເສີມຜົນປະໂຫຍດ ແລະ ການຢູ່ດີກິນດີຂອງຜູ້ຢູ່ອາໄສໃນ ສະຖານພະຍາບານ (Nursing home) ແລະ ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home[1]. ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care

---

[1] ໃນເອກະສານນີ້,ຄຳສັບ “ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ” ໝາຍເຖິງ ສະຖານພະຍາບານ *Nursing Home* ຫລື ສະຖານພະຍາບານຄົນສະລາແລະຄົນພິການ *Boarding Care Home.*

# ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

Home ອາດຈະບໍ່ຮຽກຮ້ອງຕ້ອງການໃຫ້ຜູ້ຢູ່ອາໄສ ສະລະສິດທິເຫຼົ່ານີ້ຕາມເງື່ອນໄຂຂອງການຮັບຄົນເຈັບເຂົ້າໃນ ສະຖານທີ່ພັກເຊົາຟື້ນຟູສຸຂະພາບນີ້. ຜູ້ປົກຄອງ ຫລື ຜູ້ດູແລໃດນຶ່ງຂອງຄົນປ່ວຍ ຫລື ໃນເວລາທີ່ ຜູ້ປົກຄອງ ຫລື ຜູ້ດູແລ ບໍ່ຢູ່, ບຸກຄົນກ່ຽວຂ້ອງ, ໂດຍຕາງໜ້າຜູ້ຢູ່ອາໄສ ອາດບັງຄັບໃຊ້ສິດເຫຼົ່ານີ້ ຕາມກົດໝາຍ. ບຸກຄົນກ່ຽວຂ້ອງຍັງອາດບັງຄັບໃຊ້ສິດເຫຼົ່ານີ້ຕາມກົດໝາຍໂດຍ ຕາງໜ້າຄົນປ່ວຍຜູ້ທີ່ມີ ຜູ້ປົກຄອງ ຫລື ຜູ້ດູແລ ຜ່ານ ສໍານັກງານບໍລິຫານ ຫລື ຜ່ານ ສານເມືອງ ທີ່ໄດ້ມີອໍານາດຕັດສິນ ກ່ຽວກັບ ການເປັນຜູ້ປົກຄອງ ແລະ ຜູ້ດູແລຕາມກົດໝາຍ. ການພິຈາລະນາ ຜົນຂອງ ການດໍາເນີນ ການບັງຄັບໃຊ້ຕາມກົດໝາຍ ສະຖານທີ່ພະຍາບານ ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ອາດຈະ, ດໍາເນີນງານໂດຍດ້ວຍຄວາມຊື່ສັດສຸດຈະລິດ, ປະຕິບັດຕາມການຊີ້ນໍາຂອງ ຜູ້ປົກຄອງ ຫລື ຜູ້ດູແລ. ມັນແມ່ນເຈດຈໍານົງຂອງກົດໝາຍນີ້ເຊິ່ງ ສິດຕ່າງໆຈະບໍ່ຖືກລະເມີດ ເຊັ່ນ:ເສລີພາບທາງດ້ານສາສະໜາແລະທາງດ້ານພົນລະເມືອງຂ ອງຄົນປ່ວຍທຸກຄົນ, ລວມທັງ ສິດທິໃນການຕັດສິນໃຈດ້ວຍຕົນເອງຢ່າງອິດສະຫຼະແລະສິດໃນກ ານຮູ້ທາງເລືອກຕ່າງໆທີ່ມີ, ແລະ ສິ່ງນັ້ນສະຖານພະຍາບານ ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home

ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ຈະສົ່ງເສີມແລະຊ່ວຍເຫຼືອໃນການໃຊ້ສິດເຫລົ່ານີ້ຢ່າງເຕັມທີ່ເທົ່າທີ່ເປັນໄປໄດ້.

# ນິຍາມ

ສໍາລັບຈຸດປະສົງຂອງຄໍາຖະແຫຼງນີ້, “ ຜູ້ຢູ່ອາໄສ” ມີຄວາມໝາຍວ່າບຸກຄົນຜູ້ທີ່ໄດ້ອະນຸຍາດເຂົ້າຟື້ນຟູໃນ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ ເບິ່ງແຍງສຸຂະພາບຜູ້ປ່ວຍບໍ່ຮ້າຍແຮງ ລວມທັງ ສະຖານທີ່ພັກເຊົາຟື້ນຟູສຸຂະພາບການເບິ່ງແຍງສຸຂະພາບທີ່ເກີນກໍານົດເວລາ, ສະຖານພະຍາບານ Nursing Home, ແລະ ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ສໍາລັບການເບິ່ງແຍງທີ່ຈໍາເປັນ, ຍ້ອນວ່າ ການປ່ວຍທາງຈິດ ແລະທາງຮ່າງກາຍ, ຄວາມພິການ, ການພັກຟື້ນຈາກການບາດເຈັບ ຫລື ໂຣກພະຍາດ ຫລື ການແກ່ສະລາຂອງອາຍຸນັ້ນໄດ້ຍືດເວລາການດູແລອອກເກີນກໍານົດ.

# ການປະກາດ ນະໂຍບາຍສາທາລະນະ

ມັນໄດ້ຖືກປະກາດໃຫ້ເປັນ ນະໂຍບາຍສາທາລະນະຂອງຣັຖນີ້ ເຊິ່ງຜົນປະໂຫຍດຂອງ ຜູ້ປ່ວຍທຸກໆຄົນຈະໄດ້ຖືກປົກປ້ອງ ໂດຍການປະກາດ ສິດທິດ້ານການເບິ່ງແຍງລະຍະສຸດທ້າຍ

ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ເຊິ່ງຈະລວມຢູ່ໃນ ແຕ່ບໍ່ໄດ້ຖືກຈຳກັດຕໍ່ ສິດທິທີ່ໄດ້ລະບຸໃນ ຄຳຖະແຫຼງການນີ້.

# ຂໍ້ມູນກ່ຽວກັບສິດທິ

ຜູ້ຢູ່ອາໄສອາດຈະຮູ້ໃນເວລາເຂົ້າໄປລົງທະບຽນ ຫລື ອາດຈະມີຜູ້ບອກວ່າ: ມີສິດທິທາງກົດໝາຍຕ່າງໆ ສໍາລັບ ການປົກປ້ອງພວກເຂົາ ໃນຊ່ວງເວລາທີ່ເຂົາເຈົ້າພັກຟື້ນຟູຢູ່ທີ່ ສະຖານພະຍາບານ Nursing home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ເຊິ່ງນັບທັງຕະຫຼອດ ການບິ່ນບົວ ແລະ ການດູແລະຮັກສາໃນຊຸມຊຸນ ແລະ ນັ້ນ ເຫຼົ່ານີ້ແມ່ນໄດ້ຖືກອະທິບາຍໃນຄຳຖະແຫຼງການທີ່ເປັນລາຍລັກອັກສອນທີ່ເພີ່ມເຕີມຂອງສິດທິທີ່ກ່ຽວຂ້ອງ ແລະ ຄວາມຮັບຜິດຊອບຕ່າງໆທີ່ອະທິບາຍໃນ ມາດຕານີ້. ການສະໜອງສິ່ງອຳນວຍຄວາມສະດວກທີ່ເໝາະສົມໃຫ້ແກ່ ຜູ້ຄົນ ຜູ້ທີ່ ມີຄວາມພິການທາງດ້ານການສື່ສານ ແລະ ຜູ້ທີ່ບໍ່ສາມາດເວົ້າພາສາອັງກິດ. ນະໂຍບາຍ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ ປະຈຸບັນ, ຜົນການກວດສອບຂອງຣັຖແລະພະແນກສາທາລະນະສຸກທ້ອງຖິ່ນ, ຄຳຊີ້ແຈງເພີ່ມເຕີມຂອງ ຄຳຖະແຫຼງການທີ່ເປັນລາຍລັກອັກສອນກ່ຽວກັບສິດທິ ຈະມີໃຫ້ແກ່ ຜູ້ຢູ່ອາໄສ, ຜູ້ປົກຄອງຂອງພວກເຂົາ ຫລື ຕົວແທນທີ່ຖືກເລືອກຂອງພວກເຂົາ ກ່ຽວກັບ ກັບ

ການຮ້ອງຂໍທີ່ມີເຫດຜົນ ຕໍ່ກັບຜູ້ບໍລິຫານ ຫລື ພະນັກງານອື່ນທີ່ມອບໝາຍ, ສອດຄ່ອງກັບ ຣັຖບັນຍັດຂອງຣັຖມິນນີໂຊຕາ ບົດທີ 13, ກົດໝາຍວ່າດ້ວຍ ການປະຕິບັດ ຂໍ້ມູນ ແລະ ມາດຕາ 626.557, ກ່ຽວຂ້ອງກັບຜູ້ໃຫ່ຍທີ່ຕ້ອງການການເບິ່ງແຍງສຸຂະພາບ.

# ການປິ່ນປົວທີ່ມີມາລະຍາດ

ຜູ້ຢູ່ອາໄສມີສິດໃນການຮັບການປິ່ນປົວທີ່ມີມາລະຍາດ ແລະ ມີຄວາມເຄົາລົບຕໍ່ກັບບຸກຄະລິກລັກສະນະຂອງພວກເຮົາຈາກພະ ນັກງານບໍລິການ ຫລື ບຸກຄົນທີ່ສະໜອງການບໍລິການ ໃນ ສະຖານທີ່ພະຍາບານ ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home.

# ການເບິ່ງແຍງສຸຂະພາບທີ່ເໝາະສົມ

ຜູ້ຢູ່ອາໄສຈະມີສິດເຂົ້າເຖິງໃນການດ້ານການແພດແລະການເບິ່ງ ແຍງສ່ວນຕົວທີ່ເໝາະສົມອີງຕາມຄວາມຕ້ອງການສ່ວນຕົວຕ່າງໆ. ການເບິ່ງແຍງທີ່ເໝາະສົມໝາຍຄວາມວ່າ ການເບິ່ງແຍງທີ່ໄດ້ຖືກມອບໝາຍເພື່ອເຮັດໃຫ້ຜູ້ຢູ່ອາໄສບັນລຸລະ ດັບສູງສຸດຂອງການທຳງານທາງຮ່າງກາຍແລະຈິດໃຈຂອງພວກເຂົາເຈົ້າ. ສິດທິນີ້ໄດ້ຖືກຈຳກັດໃນບ່ອນທີ່ ການບໍລິການ

ບໍ່ໄດ້ຖືກຊົດເຊີຍເງິນຄືນໂດຍຊັບພະຍາກອນພາກລັດ ຫລື ເອກະຊົນ.

# ຂໍ້ມູນຂອງທ່ານໝໍ

ຜູ້ຢູ່ອາໄສຄວນຈະມີ ຫລື ໄດ້ຮັບ, ຂໍ້ມູນທີ່ເປັນລາຍລັກອັກສອນ, ຊື່, ທີ່ຢູ່ທຸລະກິດ, ເບີໂທລະສັບ ແລະ ຈຸດພິເສດຕ່າງໆ ຖ້າມີ ຂອງທ່ານໝໍທີ່ຮັບຜິດຊອບ ໃນການປະສານງານ ການເບິ່ງແຍງຂອງພວກເຂົາ.
ໃນກໍລະນີບໍ່ສົມຄວນທາງການແພດ, ຕາມທີ່ໄດ້ຈົດບັນທຶກໂດຍ ທ່ານໝໍທີ່ເຂົ້າຮ່ວມໃນ
ການບັນທຶກການດູແລເບິ່ງແຍງຂອງຜູ້ຢູ່ອາໄສ, ຜູ້ປົກຄອງ ຫລື ບຸກຄົນອື່ນທີ່ຖືກມອບໝາຍໂດຍຜູ້ຢູ່ອາໄສໃນການເປັນຕົວແທນຂອງເຂົາເຈົ້າຄວນຈະໄດ້ຮັບຂໍ້ມູນ.

# ການພົວພັນກັບການບໍລິການ ສຸຂະພາບອື່ນ

ຜູ້ຢູ່ອາໄສທີ່ໄດ້ຮັບການບໍລິການຈາກຜູ້ສະໜອງການບໍລິການຂ້າງນອກແມ່ນໄດ້ຮັບສິດ, ໃນການຮ້ອງຂໍ,
ຮັບສິດໃນການຮັບຮູ້ຂໍ້ມູນຂອງຜູ້ສະໜອງການບໍລິການ.
ຜູ້ຢູ່ອາໄສຄວນຈະຖືກແຈ້ງບອກ, ເປັນລາຍລັກອັກສອນ, ສໍາລັບທຸກໆ
ການບໍລິການເບິ່ງແຍງສຸຂະພາບທີ່ໄດ້ສະໜອງໃຫ້ຜູ້ຢູ່ອາໄສໂດຍບຸກຄົນ, ບໍລິສັດ ຫລື ອົງການຈັດຕັ້ງທີ່ນອກເໜືອຈາກ

ສະຖານພະຍາບານ ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home.
ຂໍ້ມູນຄວນຈະລວມເຖິງຊື່ຂອງຜູ້ສະໜອງການບໍລິການຂ້າງນອກ, ທີ່ຢູ່ ແລະ ລາຍລະອຽດການບໍລິການເຊິ່ງອາດຖືກສະເໜີໃຫ້.
ໃນກໍລະນີບໍ່ສົມຄວນທາງການແພດ, ຕາມທີ່ໄດ້ຈົດບັນທຶກໂດຍທ່ານໝໍທີ່ເຂົ້າຮ່ວມໃນ ການບັນທຶກ ການເບິ່ງແຍງຂອງຜູ້ຢູ່ອາໄສ, ຜູ້ປົກຄອງ ຫລື ບຸກຄົນອື່ນທີ່ຖືກມອບໝາຍໂດຍຜູ້ຢູ່ອາໄສໃນການເປັນຕົວແທນຄວນຈະໄດ້ຮັບຂໍ້ມູນ.

# ຂໍ້ມູນກ່ຽວກັບການປິ່ນປົວ

ຜູ້ຢູ່ອາໄສຈະໄດ້ຮັບຂໍ້ມູນສົມບູນແລະຂໍ້ມູນປະຈຸບັນຈາກທ່ານໝໍກ່ຽວກັບ ການວິນິໄສໂຣກ, ການປິ່ນປົວ, ທາງເລືອກ,ຄວາມສ່ຽງ ແລະ ການພະຍາກອນໂຣກຕາມທີ່ກຳນົດໂດຍໜ້າທີ່ທາງກົດໝາຍຂອງທ່ານໝໍໃນການເປີດເຜີຍ.
ຂໍ້ມູນນີ້ຈະເປັນຄຳສັບແລະພາສາທີ່ຜູ້ຢູ່ອາໄສສາມາດຄາດຫວັງເພື່ອເຂົ້າໃຈຢ່າງມີເຫດຜົນ.
ຜູ້ຢູ່ອາໄສອາດຈະມາພ້ອມສະມາຊິກຄອບຄົວ ຫລື ຕົວແທນຄົນອື່ນທີ່ໄດ້ເລືອກ, ຫລື ທັງສອງ.
ຂໍ້ມູນນີ້ຈະລວມທັງຜົນທາງການແພດ ຫລື ຜົນທາງຈິດວິທະຍາທີ່ສຳຄັນຫຼາຍທີ່ອາດເປັນໄປໄດ້

ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ຂອງການປິ່ນປົວ ແລະ ທາງເລືອກຂອງມັນ.
ໃນກໍລະນີບໍ່ສົມຄວນທາງການແພດ, ຕາມທີ່ໄດ້ຈົດບັນທຶກໂດຍທ່ານໝໍທີ່ເຂົ້າຮ່ວມໃນ ການບັນທຶກ ການເບິ່ງແຍງຂອງຜູ້ຢູ່ອາໄສ, ຜູ້ປົກຄອງ ຫລື ບຸກຄົນອື່ນທີ່ຖືກມອບໝາຍໂດຍຜູ້ຢູ່ອາໄສໃນການເປັນຕົວແທນຄວນຈະໄດ້ຮັບຂໍ້ມູນ.
ແຕ່ລະບຸກຄົນມີສິດໃນການປະຕິເສດຂໍ້ມູນນີ້;

ທຸກໆຜູ້ຢູ່ອາໄສທີ່ທົນທຸກທໍລະມານຈາກທຸກໆຮູບແບບຂອງມະເຮັງເຕົ້ານົມຈະໄດ້ຮັບການແຈ້ງບອກຢ່າງລະອຽດ, ກ່ອນ ຫລື ໃນເວລາການຮັບຜູ້ປ່ວຍເຂົ້າສູນ ແລະ ໃນເວລາທີ່ຢູ່ພັກຟື້ນ, ກ່ຽວກັບວິທີການທັງໝົດທີ່ມີປະສິດທິຜົນອີກວິທີ ຂອງການຮັກສາປິ່ນປົວຂອງພະຍາດທີ່ທ່ານໝໍໃຫ້ການປິ່ນປົວນັ້ນມີຄວາມຮູ້ແລະຊ່ຽວຊານ, ລວມເຖິງ ການປິ່ນປົວໂດຍການຜ່າຕັດ, ລັງສີວິທະຍາ ແລະ ການໃຊ້ຢາເຄມີສະເພາະ ຫລື ການປິ່ນປົວແບບປະສົມປະສານ ແລະ ຄວາມສ່ຽງໄດ້ສໍາພັນກັບທຸກໆວິທີການເຫຼົ່ານັ້ນ.

# ເຂົ້າຮ່ວມໃນການວາງແຜນການປິ່ນປົວ

ການແຈ້ງ ສະມາຊິກຄອບຄົວໃຫ້ຊາບ:

1. ຜູ້ຢູ່ອາໄສຈະມີສິດໃນການເຂົ້າຮ່ວມ ການວາງງແຜນ ກ່ຽວກັບ ການເບິ່ງແຍງສຸຂະພາບຂອງພວກເຂົາ. ສິດທິນີ້ລວມເຖິງໂອກາດໃນການສົນທະນາຫາລື

ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ການປິ່ນປົວແລະ ທາງເລືອກຕ່າງໆກັບ ຜູ້ເບິ່ງແຍງສ່ວນບຸກຄົນ, ໂອກາດໃນການຮ້ອງຂໍ ແລະເຂົ້າຮ່ວມໃນການປະຊຸມການເບິ່ງແຍງດູແລທີ່ເປັນທາງການ, ແລະ ສິດທິໃນການລວມເອົາສະມາຊິກຄອບຄົວ ຫລື ຕົວແທນທີ່ໄດ້ເລືອກອື່ນໆ, ຫລື ທັງສອງ ເຂົ້າເປັນສ່ວນຮ່ວມ. ໃນກໍລະນີທີ່ຜູ້ຢູ່ອາໄສບໍ່ສາມາດມີໜ້າ, ສະມາຊິກຄອບຄົວ ຫລື ຕົວແທນອື່ນໆທີ່ເລືອກໂດຍຜູ້ຢູ່ອາໄສອາດເຂົ້າເປັນສ່ວນຮ່ວມໃນ ການປະຊຸມດັ່ງກ່າວນັ້ນ.

2. ຖ້າຜູ້ຢູ່ອາໄສຜູ້ທີ່ເຂົ້າພັກໃນ ສະຖານພະຍາບານ ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຢູ່ໃນສະພາວະບໍ່ຮູ້ສຶກຕົວ ຫລື ໂຄມ່າ ຫລື ບໍ່ສາມາດສື່ສານ, ສະຖານທີ່ພັກເຊົາຟື້ນຟູສຸຂະພາບຄວນພະຍາຍາມຢ່າງມີເຫດຜົນຕາມການກໍານົດພາຍໃຕ້ ວັກ 3 ເພື່ອແຈ້ງບອກ ສະມາຊິກຄອບຄົວ ຫລື ບຸກຄົນທີ່ຖືກມອບໝາຍທີ່ເປັນລາຍລັກອັກສອນໂດຍຜູ້ປ່ວຍໃຫ້ເປັນບຸກຄົນຕິດຕໍ່ໃນເວລາສຸກເສີນວ່າ ຜູ້ຢູ່ອາໄສໄດ້ເຂົ້າເປັນຜູ້ປ່ວຍໃນ ສະຖານພະຍາບານ ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home.” ສະຖານພະຍາບານ ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home.” ຄວນຈະອະນຸຍາດ ສະມາຊິກຄອບຄົວເພື່ອເຂົ້າຮ່ວມໃນການວາງແຜນການປິ່ນປົ

## ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ວ, ເວັ້ນແຕ່ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility ຮັບຮູ້ ແລະມີເຫດຜົນ ເຊື່ອໝັ້ນວ່າ ຜູ້ຢູ່ອາໄສມີ ຄໍາຊີ້ແນະລ່ວງໜ້າທີ່ມີຜົນບັງຄັບ ໃນທາງກົງກັນຂ້າມ ຫລື ຮັບຮູ້ຜູ້ຢູ່ອາໄສໄດ້ລະບຸໃນໜັງສືວ່າພວກເຂົາບໍ່ຕ້ອງການສະມາຊິກຄອບຄົວເຂົ້າມາເປັນສ່ວນຮ່ວມໃນການວາງແຜນການປິ່ນປົວ. ຫຼັງຈາກແຈ້ງເຕືອນສະມາຊິກຄອບຄົວແລ້ວ ແຕ່ວ່າກ່ອນອະນຸຍາດສະມາຊິກຄອບຄົວ ເຂົ້າຮ່ວມ ໃນການວາງແຜນການປິ່ນປົວ, ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຕ້ອງພະຍາຍາມຢ່າງມີເຫດຜົນ, ສອດຄ່ອງກັບການປະຕິບັດທາງການແພດທີ່ມີເຫດຜົນ, ເພື່ອຕັດສິນ ຖ້າຜູ້ຢູ່ອາໄສໄດ້ເຮັດຄໍາຊີ້ແນະລ່ວງໜ້າທີ່ກ່ຽວຂ້ອງກັບ ການຕັດສິນໃຈທາງດ້ານການເບິ່ງແຍງສຸຂະພາບຂອງຜູ້ຢູ່ອາໄສ. ສໍາລັບຈຸດປະສົງຂອງວັກນີ້, “ ຄວາມພະຍາຍາມທີ່ມີເຫດຜົນ” ລວມເຖິງ:

A. ກວດສອບຂອງໃຊ້ສ່ວນຕົວຂອງຜູ້ຢູ່ອາໄສ;

B. ກວດສອບບັນທຶກທາງການແພດຂອງຜູ້ຢູ່ອາໄສຊຶ່ງເປັນຂອງ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility;

C. ສອບຖາມຜູ້ຕິດຕໍ່ສຸກເສີນ ຫລື ສະມາຊິກຄອບຄົວຜູ້ໃດນຶ່ງວ່າ ຜູ້ຢູ່ອາໄສໄດ້ເຮັດຄໍາຊີ້ແນະລ່ວງໜ້າ ຫລື ບໍ

ແລະຜູ້ຢູ່ອາໄສໄດ້ພົບທ່ານໝໍເພື່ອຂໍການດູແລເບິ່ງແຍງຕາມປົກກະຕິ ຫຼື ບໍ່; ແລະ

D. ສອບຖາມທ່ານໝໍທີ່ຜູ້ຢູ່ອາໄສໄດ້ພົບເພື່ອຂໍການດູແລເບິ່ງແຍງຕາມປົກກະຕິ, ຖ້າຮູ້, ຜູ້ຢູ່ອາໄສໄດ້ເຮັດຄຳຊີ້ແນະລ່ວງໜ້າ ຫຼືບໍ່. ຖ້າສະຖານພະຍາບານ Nursing Home ຫຼື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ແຈ້ງເຕືອນສະມາຊິກຄອບຄົວ ຫລື ຜູ້ຕິດຕໍ່ສຸກເສີນທີ່ໄດ້ຖືກມອບໝາຍ ຫລື ອະນຸຍາດສະມາຊິກຄອບຄົວໃນການເຂົ້າຮ່ວມວາງແຜນການປິ່ນປົວໂດຍອີງໃສ່ວັກນີ້, ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility ບໍ່ຮັບຜິດຊອບທາງກົດໝາຍຕໍ່ຄວາມເສຍຫາຍຕ່າງໆຂອງຜູ້ຢູ່ອາໄສ ຍ້ອນເຫດຜົນທີ່ວ່າ ການແຈ້ງການຂອງສະມາຊິກຄອບຄົວ ຫລື ຜູ້ຕິດຕໍ່ສຸກເສີນ ຫລື ການເຂົ້າຮ່ວມຂອງສະມາຊິກຄອບຄົວແມ່ນບໍ່ເໝາະສົມ,ບໍ່ສົມຄວນ ຫລື ໄດ້ລ່ວງລະເມີດສິດທິຄວາມເປັນສ່ວນຕົວ.

3. ໃນການພະຍາຍາມຕາມເຫດແລະຜົນເພື່ອແຈ້ງສະມາຊິກຄອບຄົວ ຫລື ຜູ້ຕິດຕໍ່ສຸກເສີນທີ່ຖືກມອບໝາຍໃຫ້ຮັບຊາບ, ສະຖານພະຍາບານ Nursing Home ຫຼື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care

Home ຄວນພະຍາຍາມໃນການລະບຸຕົວສະມາຊິກຄອບຄົວ ຫລື ຜູ້ຕິດຕໍ່ສຸກເສີນທີ່ຖືກມອບໝາຍໂດຍການກວດສອບຂອງໃຊ້ສ່ວນຕົວຂອງຜູ້ຢູ່ອາໄສແລະການບັນທຶກທາງການແພດທີ່ເປັນຂອງ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility. ຖ້າ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ບໍ່ສາມາດແຈ້ງ ສະມາຊິກຄອບຄົວ ຫລື ຜູ້ຕິດຕໍ່ສຸກເສີນທີ່ຖືກມອບໝາຍໃຫ້ຊາບໄດ້ພາຍໃນ 24 ຊົ່ວໂມງ ຫລັງຈາກ ການຮັບຜູ້ປ່ວຍເຂົ້າ, ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຄວນແຈ້ງ ສໍານັກງານ ບໍລິການ ສັງຄົມ ຄາວຕີ້ ຫລື ສໍານັກງານການບັງຄັບໃຊ້ກົດໝາຍທ້ອງຖິ່ນເພື່ອຮັບຊາບວ່າ ຜູ້ຢູ່ອາໄສໄດ້ຖືກຮັບເຂົ້າໃນສູນ ແລະ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility ບໍ່ສາມາດແຈ້ງ ສະມາຊິກຄອບຄົວ ຫລື ຜູ້ຕິດຕໍ່ສຸກເສີນທີ່ຖືກມອບໝາຍໃຫ້ຊາບໄດ້. ສໍານັກງານ ບໍລິການ ສັງຄົມ ຄາວຕີ້ ຫລື ສໍານັກງານການບັງຄັບໃຊ້ກົດໝາຍທ້ອງຖິ່ນຈະໃຫ້ຄວາມຊ່ວຍເຫຼືອ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ໃນການລະບຸຕົວແລະແຈ້ງ ສະມາຊິກຄອບຄົວ ຫລື

ຜູ້ຕິດຕໍ່ສຸກເສີນທີ່ຖືກມອບໝາຍໃຫ້ຮັບຊາບ. ສຳນັກງານບໍລິການ ສັງຄົມ ຄາວຕີ້ ຫລື ສຳນັກງານການບັງຄັບໃຊ້ກົດໝາຍທ້ອງຖິ່ນ ທີ່ຊ່ວຍເຫຼືອ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ບໍ່ຮັບຜິດຊອບທາງກົດໝາຍຕໍ່ຄວາມເສຍຫາຍຕ່າງໆຂອງຜູ້ຢູ່ ອາໄສ ຍ້ອນເຫດຜົນທີ່ວ່າ ການແຈ້ງການຂອງສະມາຊິກຄອບຄົວ ຫລື ຜູ້ຕິດຕໍ່ສຸກເສີນ ຫລື ການເຂົ້າຮ່ວມຂອງສະມາຊິກຄອບຄົວແມ່ນບໍ່ເໝາະສົມ,ບໍ່ສົມ ຄວນ ຫລື ໄດ້ລ່ວງລະເມີດສິດທິຄວາມເປັນສ່ວນຕົວ.

# ການສືບຕໍ່ໃນການດູແລເບິ່ງແຍງ

ຜູ້ຢູ່ອາໄສຄວນຈະມີສິດໃນການຖືກດູແລະເບິ່ງແຍງເປັນປະຈຳ ແລະ ຕໍ່ເນື່ອງຕາມເຫດແລະຜົນຂອງ ການມອບໝາຍໜ້າທີ່ພະນັກງານຕາມຂອບເຂດນະໂຍບາຍຂອ ງ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ໄດ້ອະນຸຍາດນັ້ນ.

## ສິດທິໃນການປະຕິເສດການດູແລເບິ່ງແຍງ

ຜູ້ຢູ່ອາໄສທີ່ມີຄຸນສົມບັດຄົບຖ້ວນຄວນຈະມີສິດໃນການປະຕິເສດການປິ່ນປົວ ອີງຕາມ ຂໍ້ມູນທີ່ກຳນົດພາຍໃຕ້ມາດຕາຂ້າງເທິງທີ່ມີຫົວຂໍ້ " ຂໍ້ມູນກ່ຽວກັບການປິ່ນປົວ". ຜູ້ຢູ່ອາໄສທີ່ປະຕິເສດການປິ່ນປົວ, ການຮັກສາດ້ວຍຢາ ຫລື ຂໍ້ຫ້າມໃນອາຫານ ຈະຖືກແຈ້ງບອກກ່ຽວກັບຜົນທີ່ຕາມມາຂອງການປະຕິເສດ ທີ່ອາດມີໃນດ້ານການແພດ ຫລື ທາງຈິດວິທະຍາທີ່ສຳຄັນ, ປະຕິເສດໃນການປະກອບເອກະສານໃນການບັນທຶກທາງການແພດສ່ວນບຸກຄົນ. ໃນກໍລະນີທີ່ຜູ້ຢູ່ອາໄສບໍ່ສາມາດເຂົ້າໃຈສະພາວະແວດລ້ອມແຕ່ບໍ່ໄດ້ຖືກວິນິໄສ ຫລື ຕັດສິນວ່າໄຮ້ຄວາມສາມາດ, ຫລື ໃນເວລາ ການຮຽກຮ້ອງທາງກົດໝາຍ ຈຳກັດ ສິດທິໃນການປະຕິເສດ ການປິ່ນປົວ, ເງື່ອນໄຂແລະສະພາວະແວດລ້ອມຈະຖືກບັນທຶກເປັນເອກະສານຢ່າລະອຽດ
ໂດຍທ່ານໝໍທີ່ເຂົ້າຮ່ວມໃນການບັນທຶກທາງການແພດຂອງຜູ້ຢູ່ອາໄສ.

## ການວິໄຈທົດລອງ

ໜັງສື,
ການຍິນຍອມທີ່ເປັນລາຍລັກອັກສອນຕ້ອງໄດ້ຮັບກ່ອນການເຂົ້າຮ່ວມໃນການວິໄຈທົດລອງຂອງຄົນປ່ວຍ.

ຜູ້ຢູ່ອາໄສມີສິດໃນການປະຕິເສດໃນການເຂົ້າຮ່ວມ. ບໍ່ວ່າການຍິນຍອມ ຫຼື ການປະຕິເສດນັ້ນຈະຖືກບັນທຶກເປັນເອກະສານຢູ່ໃນການບັນທຶກການດູແລເບິ່ງແຍງສ່ວນບຸກຄົນ.

# ຄວາມເປັນສ່ວນຕົວໃນການປິ່ນປົວ

ຜູ້ຢູ່ອາໄສຈະມີສິດໄດ້ຮັບຄວາມເຄົາລົບນັບຖື ແລະ ຄວາມເປັນສ່ວນຕົວຕາມທີ່ກ່ຽວຂ້ອງກັບໂປຣແກຣມການດູແລເບິ່ງແຍງສ່ວນຕົວ ແລະການກວດຮ່າງກາຍຂອງພວກເຂົາ. ການຫາລືກ່ຽວກັບຄົນໄຂ້, ການປຶກສາ, ການກວດພະຍາດ ແລະ ການປິ່ນປົວ ແມ່ນເປັນຄວາມລັບ ແລະ ຈະດຳເນີນຢ່າງລະມັດລະວັງ. ຄວາມເປັນສ່ວນຕົວຈະຖືກເຄົາລົບໃນເວລາໃຊ້ຫ້ອງນ້ຳ, ອາບນ້ຳ ແລະ ກິດຈະກຳອື່ນໆດ້ານການອະນາໄມສ່ວນຕົວ, ຍົກເວັ້ນໃນກໍລະນີຈຳເປັນເພື່ອຄວາມປອດໄພຂອງຜູ້ຢູ່ອາໄສ ຫລື ການຊ່ວຍເຫຼືອ.

# ຄວາມລັບໃນການບັນທຶກ

ຜູ້ຢູ່ອາໄສຈະໄດ້ຮັບປະກັນໃນການປິ່ນປົວທີ່ເປັນຄວາມລັບກ່ຽວກັບການບັນທຶກສ່ວນຕົວແລະທາງດ້ານການແພດຂອງພວກເຂົາ, ແລະອາດຈະອະນຸຍາດໃຫ້ ຫລື ປະຕິເສດ ເປີດເຜີຍຂໍ້ມູນຂອງພວກເຂົາໃຫ້ ບຸກຄົນພາຍນອກ

ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home. ຜູ້ຢູ່ອາໄສຈະໄດ້ຮັບການແຈ້ງໃຫ້ຊາບໃນເວລາບັນທຶກສ່ວນຕົວຖືກຮ້ອງຂໍໂດຍບຸກຄົນໃດນຶ່ງພາຍນອກ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ແລະອາດເລືອກເອົາຜູ້ໃດນຶ່ງເພື່ອໄປນຳພວກເຂົາໃນເວລາທີ່ບັນທຶກ ຫລື ຂໍ້ມູນແມ່ນເປັນຫົວຂໍ້ຂອງການສຳພາດສ່ວນຕົວ. ສຳເນົາການບັນທຶກແລະຂໍ້ມູນທີ່ເປັນລາຍລັກອັກສອນຈາກການບັນທຶກຈະມີໃຫ້ ອີງຕາມຂໍ້ປີກຍ່ອຍນີ້ ແລະ ກົດໝາຍວ່າດ້ວຍການບັນທຶກປະຫວັດຄົນໄຂ້ຣັຖມິນນີໂຊຕາ, ມາດຕາ 144.291 ຫາ 144.298. ສິດທິນີ້ບໍ່ໄດ້ນຳໃຊ້ ເພື່ອຮ້ອງທຸກໃນການສືບສວນ ແລະ ການກວດກາເຊິ່ງດຳເນີນໂດຍ ພະແນກສາທາລະນະສຸກ, ບ່ອນທີ່ໄດ້ຖືກຮຽກຮ້ອງໂດຍ ບຸກຄົນທີສາມທີ່ມີສັນຍາການຊຳລະເງິນ, ຫຼື ບ່ອນທີ່ລະບຸ ແລະອະທິບາຍໃນກົດໝາຍ.

# ການເປີດເຜີຍຂໍ້ມູນກ່ຽວກັບການບໍລິການທີ່ມີຢູ່

ຜູ້ຢູ່ອາໄສຈະຖືກແຈ້ງບອກ, ກ່ອນ ຫລື ໃນເວລາຮັບຜູ້ປ່ວຍ ແລະ ໃນເວລາທີ່ຢູ່ພັກພື້ນ, ກ່ຽວກັບການບໍລິການທີ່ລວມຢູ່ໃນເງິນອຸດໜູນພື້ນຖານແຕ່ລະວັ

ນຂອງສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຫລື ລາຄາຫ້ອງຕໍ່ວັນ ແລະ ການບໍລິການອື່ນໆທີ່ມີຢູ່ນັ້ນໂດຍຄິດຄ່າເພີ່ມ. ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Homeຈະພະຍາຍາມທຸກສິ່ງທຸກຢ່າງເພື່ອຊ່ວຍເຫຼືອຜູ້ຢູ່ອາໄສເພື່ອຮັບຂໍ້ມູນກ່ຽວກັບ Medicare ຫລື ໂປຼແກຣມຊ່ວຍເຫຼືອທາງການແພດນັ້ນຈະຈ່າຍເງິນສໍາລັບການບໍລິການໃດນຶ່ງ ຫລື ທັງໝົດທີ່ເວົ້າມາຂ້າງເທິງ ຫລື ບໍ.

# ການບໍລິການ ການຕອບຄໍາຖາມ

ສໍາລັບຄໍາຖາມແລະຄໍາຮ້ອງຂໍຂອງພວກເຂົາ, ຜູ້ຢູ່ອາໄສຈະມີສິດທິໃນການຮັບຄໍາຕອບທັນທີ ແລະ ມີເຫດຜົນ.

# ຄວາມເປັນສ່ວນຕົວ

ຜູ້ຢູ່ອາໄສຈະມີສິດທິຕໍ່ກັບທຸກໆການພິຈາລະນາກ່ຽວກັບ ຄວາມເປັນສ່ວນຕົວ, ບຸກຄະລິກລັກສະນະແລະເອກະລັກທາງວັດທະນະທໍາຂອງພວກເຂົາ ທີ່ພົວພັນເຖິງ ສັງຄົມ, ສາສະໜາ ແລະ ການມີສະພາບຈິດທີ່ດີຂອງພວກເຂົາ. ພະນັກງານ ຂອງ ສະຖານພະຍາບານ Nursing Home ຫລື

ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຈະເຄົາລົບຄວາມເປັນສ່ວນຕົວໃນຫ້ອງພັກຂອງຜູ້ຢູ່ອາໄສ ໂດຍການສະແດງອອກດ້ວຍການເຄາະປະຕູແລະຂໍອະນຸຍາດກ່ອນເຂົ້າຫ້ອງພັກ, ເວັ້ນແຕ່ໃນກໍລະນີສຸກເສີນ ຫລື ບ່ອນທີ່ບໍ່ເໝາະສົມ.

# ຄວາມເປັນສ່ວນຕົວໃນການສື່ສານ

ຜູ້ຢູ່ອາໄສອາດພົວພັນ ແລະສື່ສານກັບຄົນທີ່ພວກເຂົາເລືອກຢ່າງເປັນສ່ວນຕົວ ແລະ ອາດເຂົ້າໄປໃນຫ້ອງ, ເວັ້ນແຕ່ໄດ້ລະບຸໂດຍ ກົດໝາຍວ່າດ້ວຍການຂໍ້ຜູກມັດຂອງລັດມິນນີໂຊຕາ Minnesota Commitment Act, ອາດອອກຈາກ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຕາມທີ່ພວກເຂົາເລືອກ. ຜູ້ຢູ່ອາໄສຈະເຂົ້າເຖິງ, ການໃຊ້ຈ່າຍ, ອຸປະກອນການຂຽນ, ເຄື່ອງຂຽນ ແລະ ຄ່າໄປສະນີຂອງພວກເຂົາ. ຈົດໝາຍສ່ວນຕົວຈະຖືກສົ່ງໂດຍບໍ່ຕ້ອງຖືກຫຍ້ ຸງກ່ຽວ, ຈະໄດ້ຮັບໂດຍຊ່ອງຍັງປິດຢູ່, ເວັ້ນແຕ່ວ່າ ກໍລະນີທາງດ້ານການແພດ ຫລື ແຜນການ ທີ່ຖືກຫ້າມ ແລະໄດ້ບັນທຶກໃນບັນທຶກທາງການແພດດຂອງຄົນໄຂ້ໂດຍທ່ານໝໍ. ຈະສາມາດເຂົ້າເຖິງໂທລະສັບໄດ້ ບ່ອນທີ່ຜູ້ຢູ່ອາໄສສາມາດໃຊ້ໂທ ຫລື ຮັບສາຍ ແລະຍັງສາມາດລົມໂທລະສັບຢ່າງສ່ວນຕົວໄດ້.

# ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ສະຖານພະຍາບານ Nursing Home ຫຼື
ສະຖານພະຍາບານຄົນສະລາແລະຄົນພິການ Boarding Care
Home
ບ່ອນທີ່ບໍ່ສາມາດສະໜອງພື້ນທີ່ສ່ວນຕົວນັ້ນຈະດຳເນີນການຈັດ
ການທີ່ສົມເຫດສົມຜົນເພື່ອຈັດສະຖານທີ່ໃຫ້ຜູ້ຢູ່ອາໄສມີຄວາມເ
ປັນສ່ວນຕົວໃນການໂທລະສັບ.
ໃນການຮັບຜູ້ປ່ວຍເຂົ້າພັກໃນສະຖານພະຍາບານ Nursing
Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ
Boarding Care Home
ເຊິ່ງເປັນບ່ອນທີ່ ັຣັຖບັນຍັດຂອງສະຫະລັດຫ້າມເປີດເຜີຍກ່ຽວ
ກັບຂໍ້ມູນປະຈຳຕົວຂອງຜູ້ຢູ່ອາໄສຕໍ່ກັບຜູ້ໂທ ແລະ
ຜູ້ມາຢ້ຽມຢາມໂດຍບໍ່ໄດ້ຮັບອະນຸຍາດ, ສ່ວນຜູ້ຢູ່ອາໄສ, ຫລື
ຜູ້ປົກຄອງ ຫລື ຜູ້ດູແລທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຢູ່ອາໄສ,
ຈະໄດ້ຮັບໂອກາດເພື່ອອະນຸຍາດ
ໃນການເປີດເຜີຍກ່ຽວກັບການມາພັກຂອງຜູ້ຢູ່ອາໄສທີ່
ສະຖານພະຍາບານ Nursing Home ຫລື
ສະຖານພະຍາບານຄົນສະລາແລະຄົນພິການ Boarding Care
Home ໃຫ້ແກ່ຜູ້ໂທ ແລະຜູ້ຢ້ຽມຢາມ
ເຊິ່ງພວກເຂົາອາດຕ້ອງການສື່ສານກັບຜູ້ຢູ່ອາໄສ.
ໃນຂອບເຂດທີ່ເປັນໄປໄດ້, ຜູ້ປົກຄອງ ຫລື
ຜູ້ດູແລທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຢູ່ອາໄສຈະພິຈາລະນາໄຕ່
ຕອງຄວາມຄິດຄວາມເຫັນຂອງຜູ້ຢູ່ອາໄສກ່ຽວກັບ
ການເປີດເຜີຍການພັກຢູ່ທີ່ສະຖານພະຍາບານ Nursing Home

ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຂອງຜູ້ຢູ່ອາໄສ.
ສິດທິນີ້ແມ່ນຈຳກັດໃນບ່ອນທີ່ບໍ່ສົມຄວນທາງການແພດ, ຕາມການຂຽນບັນທຶກໃນບັນທຶກການດູແລເບິ່ງແຍງຂອງຜູ້ຢູ່ອາໄສໂດຍທ່ານໝໍທີ່ເຂົ້າຮ່ວມ.
ບ່ອນທີ່ຖືກຈຳກັດກ່ຽວກັບໂປຣແກຣມ ໂດຍສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility, ແຜນການປ້ອງກັນການຂົ່ມເຫງ ອີງຕາມກົດໝາຍວ່າດ້ວຍການປົກປອ້ງຄົນສະລາທີ່ດ້ອຍໂອກາດ (Vulnerable Adults Protection Act),ມາດຕາ 626.557,ຂໍ້ປີກຍ່ອຍ 14, ວັກ(b), ສິດທິນີ້ຈະຖືກຈຳກັດອີງຕາມນັ້ນ.

# ຊັບສິນສ່ວນຕົວ

ຜູ້ຢູ່ອາໄສອາດເກັບໄວ້ ແລະໃຊ້ເຄື່ອງນຸ່ງຮົ່ມສ່ວນຕົວຂອງພວກເຂົາແລະມີມັນຕາມພື້ນທີ່ວ່າງທີ່ໄດ້ອະນຸຍາດໃຫ້, ເວັ້ນແຕ່ວ່າເມື່ອເຮັດແລ້ວອາດຈະລະເມີດສິດທິຂອງຜູ້ຢູ່ອາໄສຄົນອື່ນໆ, ແລະເວັ້ນແຕ່ວ່າຖືກຫ້າມໃນທາງການແພດ ຫລື ທາງແຜນງານ ສຳລັບເຫດຜົນທາງການແພດທີ່ໄດ້ບັນທຶກ, ຄວາມປອດໄພ ແລະ ກ່ຽວກັບແຜນງານ. ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຕ້ອງບຳລຸງຮັກສາບ່ອນຝາກເຄື່ອງທີ່ປອດໄພ ຫລື

ສະໜອງພື້ນທີ່ເກັບເຄື່ອງສ່ວນຕົວທີ່ມີກຸນແຈລ໋ອກຢ່າງດີເພື່ອເກັບສິ່ງຂອງທີ່ມີຄ່າຂອງພວກເຂົາຢ່າງປອດໄພ.
ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ອາດຈະ, ແຕ່ບໍ່ໄດ້ບັງຄັບ, ໃຫ້ການຊົດເຊີຍແກ່ ຫລື ທົດແທນ ສິ່ງຂອງທີ່ຖືກຂະໂມຍ ຫລື ທີ່ຕົກເຮ່ຍ.

## ການບໍລິການສໍາລັບ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility

ຜູ້ຢູ່ອາໄສຈະບໍ່ອອກແຮງງານ ຫລື ຮັບໃຊ້ສໍາລັບສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ເວັ້ນແຕ່ວ່າ, ກິດຈະກໍາເຫົ່ານັ້ນນອນຢູ່ໃນຈຸດປະສົງຂອງການບໍາບັດຮ່າງກາຍ ແລະ ກ່ຽວຂ້ອງກັບເປົ້າໝາຍທີ່ເໝາະສົມໃນ ບັນທຶກທາງການແພດດສ່ວນບຸກຄົນຂອງພວກເຂົາ.

## ການເລືອກຜູ້ສະໜອງສິນຄ້າ

ຜູ້ຢູ່ອາໄສອາດຊື້ ຫລື ເຊົ່າສິນຄ້າ ຫລື ການບໍລິການ ທີ່ບໍ່ນອນຢູ່ໃນ ອັດຕາເງິນອຸດໜູນແຕ່ລະວັນນັ້ນຈາກຜູ້ສະໜອງສິນຄ້າທີ່ພວກເຂົາເລືອກ ເວັ້ນແຕ່ວ່າ, ກົດໝາຍໄດ້ລະບຸຢ່າງອື່ນ.

ຜູ້ສະໜອງສິນຄ້າຈະຮັບປະກັນວ່າການຊື້ເຫຼົ່ານີ້ແມ່ນພຽງພໍເພື່ອຕອບສະໜອງຄວາມຕ້ອງການທາງການແພດ ຫລື ການປິ່ນປົວຂອງຜູ້ຢູ່ອາໄສ.

## ເລື່ອງການເງິນ

ຜູ້ຢູ່ອາໄສທີ່ມີຄຸນສົມບັດຄົບຖ້ວນອາດຈັດການເລື່ອງການເງິນສ່ວນຕົວຂອງພວກເຂົາ, ຫລື ຈະມອບບັນຊີຂອງທຸລະກຳດ້ານການເງິນໃຫ້ຜູ້ຕາງໜ້າຂອງພວກເຂົາ ຢ່າງໜ້ອຍໃນທຸກໆສາມເດືອນ ຖ້າພວກເຂົາມອບໝາຍສິດນັ້ນໃຫ້ຜູ້ຕາງໜ້າ ອີງຕາມກົດໝາຍຂອງຣັຖມີນນີໂຊຕາຕໍ່ກັບ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility ສຳລັບໄລຍະເວລາໃດນຶ່ງ.

## ສິດການຄົບຄ້າສະມາຄົມ

1. ຜູ້ຢູ່ອາໄສອາດພົບປະກັບຜູ້ຄົນ ແລະ ຮັບຜູ້ມາຢ້ຽມຢາມແລະເຂົ້າຮ່ວມໃນກິດຈະກຳກ່ຽວກັບ ການຄ້າ, ສາສະໜາ, ການເມືອງ, ຕາມທີ່ໄດ້ກຳນົດໃນມາດຕາ 203B.11 (ການລົງຄະແນນເລືອກຕັ້ງຂອງຜູ້ທີ່ບໍ່ສາມາດໄປບ່ອນເລືອຕັ້ງ ) (Absentee Voting) ແລະກຸ່ມຊຸມຊົນໂດຍປາສະຈາກການຫຸຍ້ງກ່ຽວກັບເສລີພາບກ

ານຕັດສິນໃຈຂອງພວກເຂົາ ຖ້າກິດຈະກໍາຕ່າງໆນັ້ນບໍ່ລະເມີດ ສິດຄວາມເປັນສ່ວນຕົວຂອງຜູ້ຢູ່ອາໄສຜູ້ອື່ນ ຫລື ບໍ່ໄດ້ຖືກຫວງຫ້າມໃນດ້ານກ່ຽວກັບແຜນງານ. ນີ້ລວມເຖິງ:

A. ສິດເຂົ້າໄປຮ່ວມກັບບຸກຄົນອື່ນພາຍໃນສະຖານທີ່ ຫລື ຂ້າງນອກ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility ເພື່ອເຮັດໃນສິ່ງທີ່ສາມາດປັບປຸງ ໃນການການດູແລເບິ່ງແຍງ ໄລຍະຍາວ,

B. ສິດໃນການຍ້ຽມຈາກບຸກຄົນໜຶ່ງ ຜູ້ປ່ວຍໄດ້ຖືກມອບໝາຍຕາມຕົວແທນການເບິ່ງແຍງສຸຂະພາບຂອງຜູ້ປ່ວຍພາຍໃຕ້ ບົດທີ 145C;

C. ສິດໃນການຍ້ຽມແລະການຕັດສິນໃຈດ້ານການເບິ່ງແຍງສຸຂະພາບໂດຍບຸກຄົນທີ່ຖືກແຕ່ງຕັ້ງໂດຍຜູ້ປ່ວຍພາຍໃຕ້ວັກ 3.

2. ໃນການຮັບຜູ້ປ່ວຍເຂົ້າພັກໃນສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ເຊິ່ງເປັນບ່ອນທີ່ ັຣັຖບັນຍັດຂອງສະຫະລັດຫ້າມເປີດເຜີຍກ່ຽວກັບຂໍ້ມູນປະຈໍາຕົວຂອງຜູ້ຢູ່ອາໄສຕໍ່ກັບຜູ້ໂທ ແລະ ຜູ້ມາຍ້ຽມຢາມໂດຍບໍ່ໄດ້ຮັບອະນຸຍາດ, ສ່ວນຜູ້ຢູ່ອາໄສ, ຫລື ຜູ້ປົກຄອງ ຫລື ຜູ້ດູແລທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຢູ່ອາໄສ, ຈະໄດ້ຮັບໂອກາດເພື່ອອະນຸຍາດ ໃນການເປີດເຜີຍກ່ຽວກັບການມາພັກຂອງຜູ້ຢູ່ອາໄສທີ່

ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ໃຫ້ແກ່ຜູ້ໂທ ແລະຜູ້ຢ້ຽມຢາມ ເຊິ່ງພວກເຂົາອາດຕ້ອງການສື່ສານກັບຜູ້ຢູ່ອາໄສ. ໃນຂອບເຂດທີ່ເປັນໄປໄດ້, ຜູ້ປົກຄອງ ຫລື ຜູ້ດູແລທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຢູ່ອາໄສຈະພິຈາລະນາໄຕ່ຕອງຄວາມຄິດຄວາມເຫັນຂອງຜູ້ຢູ່ອາໄສກ່ຽວກັບການເປີດເຜີຍການມີໜ້າຢູ່ໃນສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility ຂອງຜູ້ຢູ່ອາໄສ.

3. ໃນການຮັບຜູ້ປ່ວຍເຂົ້າໃນ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home, ຜູ້ຢູ່ອາໄສ ຫລື ຜູ້ປົກຄອງ ຫລື ຜູ້ດູແລທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຢູ່ອາໄສ, ຕ້ອງໄດ້ຮັບໂອກາດເພື່ອແຕ່ງຕັ້ງບຸກຄົນນຶ່ງຜູ້ທີ່ບໍ່ກ່ຽວຂ້ອງ ຜູ້ທີ່ຈະມີຖານະເປັນຍາດພີ່ນ້ອງໃກ້ສິດຂອງຜູ້ຢູ່ອາໄສກ່ຽວກັບການຢ້ຽມ ແລະ ຕັດສິນໃຈດ້ານການເບິ່ງແຍງສຸຂະພາບ. ການແຕ່ງຕັ້ງຕ້ອງລວມເອົາການບັນທຶກທາງດ້ານສຸຂະພາບໃຫ້ນຳ. ກ່ຽວກັບ ການຕັດສິນໃຈໃນການເບິ່ງແຍງສຸຂະພາບ, ການຊີ້ແນະການເບິ່ງແຍງສຸຂະພາບ ຫລື ການມອບໝາຍຂອງຕົວແທນ ການເບິ່ງແຍງສຸຂະພາບພາຍໃຕ້ ບົດທີ 145C ມີອຳນາດເໜືອກວ່າ ການແຕ່ງຕັ້ງທີ່ໄດ້ປະຕິບັດພາຍໃຕ້ວັກນີ້.

ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

ບຸກຄົນທີ່ບໍ່ກ່ຽວຂ້ອງອາດຍັງຖືກລະບຸຕົວຄືແບບນັ້ນ ໂດຍຜູ້ຢູ່ອາໄສ ຫລື ໂດຍ ຄອບຄົວຂອງຜູ້ຢູ່ອາໄສ.

## ສະພາທີ່ປຶກສາ (Advisory Councils)

ຜູ້ຢູ່ອາໄສ ແລະ ຄອບຄົວຂອງພວກເຂົາຈະມີສິດໃນການຈັດຕັ້ງ, ບຳລຸງຮັກສາ ແລະ ເຂົ້າຮ່ວມໃນ ການໃຫ້ຄຳປຶກສາ ຜູ້ຢູ່ອາໄສ ແລະ ສະພາຄອບຄົວ. ທຸກໆສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Homeຈະໃຫ້ການຊ່ວຍເຫລືອແລະສະຖານທີ່ສຳລັບປະຊຸມ. ການປະຊຸມສະພາຈະເຖືກຈັດຂື້ນແບບສ່ວນຕົວ, ພ້ອມກັບພະນັກງານ ແລະຜູ້ຢ້ຽມຢາມເຂົ້າຮ່ວມ ເຊິ່ງລ້ວນແມ່ນຜູ້ທີ່ຖືກເຊີນໂດຍສະພາເທົ່ານັ້ນ. ພະນັກງານຈະຖືກມອບໝາຍຄວາມຮັບຜິດຊອບ ໃນການໃຫ້ຄວາມຊ່ວຍເຫລືອນີ້ ແລະຕອບສະໜອງໃນເລື່ອງການຮຽກຮ້ອງທີ່ເປັນລາຍລັກອັກສອນ ຈາກ ການປະຊຸມສະພາ. ຜູ້ຢູ່ອາໄສແລະສະພາຄອບຄົວຈະຖືກສົ່ງເສີມເພື່ອສະແດງຄຳແນະນຳກ່ຽວກັບນະໂຍບາຍຕ່າງໆຂອງສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home.

## ຜູ້ຢູ່ອາໄສທີ່ແຕ່ງງານແລ້ວ

ຜູ້ຢູ່ອາໄສ, ຖ້າແຕ່ງງານແລ້ວ, ຈະຖືກຮັບປະກັນຄວາມເປັນສ່ວນຕົວສຳລັບການມາຢ້ຽມຢາມຂອງຄູ່ສົມຣົດ ແລະ ຖ້າທັງສອງລ້ວນແມ່ນຜູ້ຢູ່ອາໄສໃນສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home, ພວກເຂົາຈະໄດ້ຮັບອະນຸຍາດຢູ່ຮ່ວມຫ້ອງດຽວກັນໄດ້, ເວັ້ນແຕ່ວ່າ, ໃນກໍລະນີ ຜ່າຝືນຂໍ້ຫ້າມແລະສິ່ງຖືກບັນທຶກກ່ຽວກັບດ້ານການແພດໂດຍນາຍຫມໍຂອງພວກເຂົາໃນບັນທຶກທາງການແພດ.

## ການຍົກຍ້າຍ ແລະ ການໄລ່ອອກ

ຜູ້ຢູ່ອາໄສຈະບໍ່ຖືກຍົກຍ້າຍ ຫລື ໄລ່ອອກໂດຍບໍ່ມີເຫດຜົນ. ຜູ້ຢູ່ອາໄສຈຳຕ້ອງຖືກແຈ້ງໃຫ້ຮັບຊາບ, ເປັນລາຍລັກອັກສອນ, ກ່ຽວກັບການໄລ່ອອກ ຫລື ການຍົກຍ້າຍທີ່ໄດ້ສະເໜີ ແລະ ການໃຫ້ເຫດຜົນວ່າຊອບທຳຕາມກົດໝາຍຂອງມັນນັ້ນຈະບໍ່ເກີນ 30 ວັນ ກ່ອນການໄລ່ອອກຈາກ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ແລະເຈັດວັນກ່ອນການຍົກຍ້າຍຫາຫ້ອງນອນອື່ນພາຍໃນສະຖານພະຍາບານ Nursing Home ຫລື

ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home. ການແຈ້ງການນີ້ຈະລວມທັງສິດຂອງຜູ້ຢູ່ອາໄສ ເພື່ອໂຕ້ແຍ້ງເລື່ອງທີ່ໄດ້ສະເໜີນັ້ນ, ພ້ອມກັບທີ່ຢູ່ແລະເບີໂທລະສັບ ຂອງຜູ້ກວດສອບການຮ້ອງທຸກ (ombudsman) ເຂດ ສຳລັບ ການເບິ່ງແຍງໄລຍະຍາວ ອີງຕາມ ກົດໝາຍວ່າດ້ວຍ ການຊ່ວຍເຫຼືອຜູ້ສະລາ (Older Americans Act) ມາດຕາ 307(a)(12). ຜູ້ຢູ່ອາໄສ, ຖືກແຈ້ງໃຫ້ຊາບກ່ຽວກັບສິດທິນີ້, ອາດເລືອກຍ້າຍໄປບ່ອນໃໝ່ກ່ອນໄລຍະເວລາການແຈ້ງການສິ້ນສຸດ. ໄລຍະເວລາການແຈ້ງການອາດສັ້ນລົງໃນສະຖານະການຕ່າງໆທີ່ນອກເໜືອຈາກການຄວບຄຸມຂອງສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ເຊັ່ນ ການຕັດສິນໂດຍ ການທົບທວນການໃຊ້ຊັບພະກອນ (UR), ການອຳນວຍຄວາມສະດວກດ້ານທີ່ພັກແກ່ຜູ້ຢູ່ອາໄສທີ່ເຂົ້າໃໝ່, ການປ່ຽນແປງໃນໂປຣແກຣມທາງການແພດ ຫລື ການປິ່ນປົວຂອງຜູ້ຢູ່ອາໄສ, ສະຫວັດດີການສັງຄົມຂອງຜູ້ຢູອາໄສ ຫລື ຂອງຜູ້ຢຸອາໄສຄົນອື່ນ, ຫລື ບໍ່ມີການຊຳລະເງິນໃນການພັກຢູ່ອາໄສ ເວັ້ນແຕ່ວ່າ, ຖືກຫ້າມໂດຍໂປຣແກຣມສາທາລະນະ ຫລື ໂປຣແກຣມຈ່າຍສຳລັບການເບິ່ງແຍງຜູ້ຢູ່ອາໄສ, ຕາມທີ່ໄດ້ບັນທຶກໃນບັນທຶກທາງການແພດ. ສະຖານພະຍາບານ

Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຈະພະຍາຍາມດ້ວຍເຫດແລະຜົນເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຢູ່ອາໄສຄົນໃໝ່ໂດຍບໍ່ລົບກວນໃນເລື້ອງການຈັດຫ້ອງໃຫ້ຢູ່ໃໝ່.

## ບໍລິການດ້ານທະນາຍຄວາມ ແລະ ການປົກປ້ອງ

ຜູ້ຢູ່ອາໄສຈະມີສິດ ຕາມເຫດແລະຜົນໃນການເຂົ້າເຖິງການບໍລິການປົກປ້ອງສິດທິ ແລະ ການບໍລິການດ້ານທະນາຍຄວາມໃດນຶ່ງ ທີ່ມີເຫດຜົນ,ໃນເວລາທີ່ສົມຄວນ ເພື່ອທີ່ຜູ້ຢູ່ອາໄສອາດໄດ້ຮັບຄວາມຊ່ວຍເຫຼືອໃນການທຳຄວາມເຂົ້າໃຈ, ນຳໃຊ້ສິດ ແລະ ປົກປ້ອງສິດທີ່ໄດ້ກຳນົດໃນ ສິດທິດ້ານການເບິ່ງແຍງລະຍະສຸດທ້າຍ ແລະ ກຳນົດໃນກົດໝາຍອື່ນໆ. ສິດທິນີ້ລວມເຖິງໂອກາດສຳລັບການສື່ສານສ່ວນຕົວລະຫວ່າງຜູ້ຢູ່ອາໄສແລະຕົວແທນຂອງການບໍລິການປົກປ້ອງສິດ ຫລື ການບໍລິການດ້ານທະນາຍຄວາມ.

# ການຈໍາກັດ

1. ຜູ້ອາໄສທີ່ມີຄຸນສົມບັດຄົບຖ້ວນຂອງສະຖານພະຍາບານ, ສະມາຊິກຄອບຄົວຂອງຜູ້ຢູ່ອາໄສຜູ້ທີ່ບໍ່ມີຄຸນສົມບັດຄົບຖ້ວນ, ຜູ້ປົກຄອງແລະຜູ້ດູແລທີ່ກົດໝາຍແຕ່ງຕັ້ງ, ແລະຕົວແທນການເບິ່ງແຍງສຸຂະພາບ ຕາມທີ່ໄດ້ກໍານົດພາຍໃຕ້ມາດຕາ 145C.01, ແມ່ນມີສິດເພື່ອຮ້ອງຂໍ ແລະ ຍິນຍອມຕໍ່ກັບການດໍາເນີນ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ ເພື່ອທີ່ຮັກສາອາການທາງການແພດຂອງຜູ້ຢູ່ອາໄສ.

2. ໃນການຮັບການຮ້ອງຂໍສໍາລັບການການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ, ສະຖານພະຍາບານ Nursing Home ຈະແຈ້ງການເຖິງຜູ້ຢູ່ອາໄສ, ສະມາຊິກຄອບຄົວ, ຕົວແທນທີ່ຖືກຕ້ອງຕາມກົດໝາຍ ກ່ຽວກັບອັນຕະລາຍອາດເກີດທີ່ກ່ຽວຂ້ອງກັບການດໍາເນີນ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ. ສະຖານພະຍາບານ Nursing Home ຈະດໍາເນີນການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍໃຫ້ແກ່ຜູ້ຢູ່ອາໄສ ພຽງແຕ່ໃນເວລາໄດ້ຮັບໜັງສືຍິນຍອມພ້ອມລາຍເຊັນທີ່ອະນຸຍາດໃນການດໍາເນີນ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ ແລະຄໍາສັ່ງທີ່ເປັນລາຍລັກອັກສອນທີ່ປະກອບດ້ວຍຂໍ້ຄວາມສັ່ງ

ແລະກ່ານົດກ່ຽວກັບອາການທາງການແພດ ແລະ ການລະບຸສະພາບແວດລ້ອມໃດທີ່ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍນັ້ນຈະຖືກໃຊ້.

3. ສະຖານພະຍາບານ Nursing Home ດໍາເນີນການ ມັດແຂນຂາພາຍໃຕ້ ວັກ 2 ຕ້ອງ:

   A. ເອກະສານທີ່ຂັ້ນຕອນລະບຽບການໄດ້ເນັ້ນໜັກໃນວັກນັ້ນໄດ້ຖືກປະຕິບັດ;

   B. ຕິດຕາມຄວບຄຸມການໃຊ້ການຈໍາກັດ ຫລື ມັດແຂນຂາໂດຍຜູ້ຢູ່ອາໄສ; ແລະ

   C. ດໍາເນີນ ເປັນລະຍະໆ ເຊັ່ນ: ການປຶກສາຫາລືກັບຜູ້ຢູ່ອາໄສ,ຄອບຄົວ ແລະ ທ່ານໝໍເຂົ້າຮ່ວມຮັກສາ, ປະເມີນຄວາມຕ້ອງການອີກຄັ້ງສໍາລັບການກໍາຈັດ ຫລື ມັດແຂນຂາ ຂອງຜູ້ຢູ່ອາໄສ.

4. ສະຖານພະຍາບານ Nursing Home ຈະບໍ່ຂື້ນຢູ່ກັບ ເງິນປັບໄໝ, ເງິນປັບໄໝຈາກສານພົນລະເຮືອນ (CMP) ຫລື ເງິນຍຽວຢາຄວາມເສຍຫາຍ ໃນການບັງຄັບໃຊ້ ການສໍາຫຼວດຂອງລັດ ຫລື ລັດຖະບານກາງ ໂດຍລໍາພັງ ເນື່ອງຈາກການອະນຸຍາດໃຊ້ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍຕາມທີ່ໄດ້ອະນຸຍາດໃນຂໍ້ປີກຍ່ອຍນີ້. ບໍ່ມີສິ່ງໃດໃນຂໍ້ປີກຍ່ອຍນີ້ຈະຂັດຂວາງຄະນະກໍາມະທິການໃນກ

ານລົງມືກະທຳເພື່ອປົກປ້ອງສຸຂະພາບ ແລະ ຄວາມປອດໄພຂອງຜູ້ຢູ່ອາໄສ ຖ້າ:

A. ການໃຊ້ການຈຳກັດຮ່າງກາຍ ຫລື ມັດແຂນຂາໄດ້ເປັນອັນຕະລາຍອັນສູງຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ຢູ່ອາໄສ, ແລະ

B. ສະຖານພະຍາບານ Nursing Home ລົ້ມເຫຼວໃນການນຳໃຊ້ມາດຕະຖານທີ່ມີເຫດຜົນ ເພື່ອປົກປ້ອງສຸຂະພາບແລະ ຄວາມປອດໄພຂອງຜູ້ຢູ່ອາໄສ.

5. ສຳລັບຈຸດປະສົງຂອງຂໍ້ປີກຍ່ອຍນີ້ “ ອາການທາງການແພດ” ລວມເຖິງ:

A. ຄວາມກັງວົນໃນຄວາມປອດໄພທາງຮ່າງກາຍຂອງຜູ້ຢູ່ອາໄສ , ແລະ

B. ຄວາມຕ້ອງການທາງດ້ານຮ່າງກາຍແລະຈິດໃຈໄດ້ຖືກສະແດງອອກໂດຍຜູ້ຢູ່ອາໄສຄົນນີ້ງ. ການຍ້ານລົ້ມອາດເປັນຈຸດເລີ້ມຕົ້ນຂອງອາການທາງດ້ານການແພດຂອງຜູ້ຢູ່ອາໄສ.

4. ຄຳສັ່ງທີ່ເປັນລາຍລັກອັກສອນຈາກທ່ານໝໍທີ່ເຂົ້າຮ່ວມຊຶ່ງປະກອບມີຂໍ້ຄວາມສັ່ງ ແລະ ການກຳນົດກ່ງວກັບ ອາການທາງການແພດແມ່ນເປັນຫລັກຖານພຽງພໍຂອງຄວາມຕ້ອງການທາງການແພດ ກ່ງວກັບ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ.

6. ໃນເວລາຕັດສິນວ່າສະຖານພະຍາບານ ໄດ້ປະຕິບັດຕາມຂໍ້ກຳນົດຕາມມາດຕະຖານ ຂອງ ລັດ ແລະລັດຖະບານກາງ ສຳລັບການໃຊ້ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ, ຄະນະກຳມະທິການຂອງສາທາລະນະສຸກແມ່ນໄດ້ຖືກເຊື່ອມເຂົ້າກັນກັບຂໍ້ຄວາມສັ່ງ ແລະ ການກຳນົດທີ່ມີໃນຄຳສັ່ງກ່ຽວກັບອາການທາງການແພດຂອງທ່ານໝໍທີ່ເຂົ້າຮ່ວມ. ຈຸດປະສົງຂອງຄຳສັ່ງ, " ອາການທາງການແພດ" ລວມທັງ ຄຳຮ້ອງຂໍໂດຍຜູ້ຢູ່ອາໄສທີ່ມີຄຸນສົມບັດຄົບຖ້ວນ, ສະມາຊິກຄອບຄົວຂອງຜູ້ຢູ່ອາໄສຜູ້ທີ່ບໍ່ມີຄຸນສົມບັດຄົບຖ້ວນ, ຫລື ຜູ້ດູແລ, ຜູ້ປົກຄອງທີ່ໄດ້ຖືກແຕ່ງຕັ້ງຕາມກົດໝາຍ, ຫລື ຕົວແທນ ການເບິ່ງແຍງສຸຂະພາບ ຕາມທີ່ໄດ້ກຳນົດພາຍໃຕ້ ມາດຕາ 145C.01, ວ່າ ສະຖານພະຍາບານໃຫ້ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ ເພື່ອຈຸດປະສົງທີ່ຈະເພີ່ມຄວາມປອດໄພທາງຮ່າງກາຍຂອງຜູ້ຢູ່ອາໄສ.

## ການດຳເນີນທີ່ປາສະຈາກການທາລຸນນະກຳ

ຜູ້ຢູ່ອາໄສຈະປອດຈາກການທາລຸນນະກຳ ຫລື ການປະຕິບັດທີ່ບໍ່ດີຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າການປົກປ້ອງຄົນສະລາທີ່ດ້ອຍໂອກາດ (Vulnerable Adults Protection Act). "ການທາລຸນນະກຳ"

ໝາຍວ່າດຳເນີນດັ່ງທີ່ໄດ້ອະທິບາຍໃນ ມາດຕາ 626.5572, ຂໍ້ປີກຍ່ອຍ 15, ຫລື ການເຈັບປ່ວຍ ຫລື ການບາດເຈັບຕາມຮ່າງກາຍທີ່ເກີດຈາກການການລົງໂທດທີ່ເຈຕະນາ ແລະ ບໍ່ແມ່ນການບຳບັດຮັກສາໂຣກ, ຫລື ການປະຕິບັດໃນຊ່ວງເວລາຕິດຕໍ່ກັນດົນໆເພື່ອສ້າງຄວາມເຈັບປວດທາງຈິດໃຈແລະຄວາມຮູ້ສຶກ. ຜູ້ຢູ່ອາໄສທຸກຄົນຍັງຈະປອດຈາກການໃຊ້ ສານເຄມີ ທີ່ບໍ່ແມ່ນການບຳບັດຮັກສາໂຣກ ແລະ ການມັດແຂນຂາ ຫລື ສ່ວນອື່ນຂອງຮ່າງກາຍ, ເວັ້ນແຕ່ກໍລະນີສຸກເສີນທີ່ໄດ້ຈົດບັນທຶກລະອຽດ, ຕາມການອະນຸຍາດ ໃນໜັງສື ຫລັງຈາກການກວດກາໂດຍທ່ານໝໍຂອງຜູ້ຢູ່ອາໄສໃນຊ່ວງເວລາທີ່ລະບຸແລະຈຳກັດ, ແລະ ພຽງແຕ່ໃນເວລາຈຳເປັນເພື່ອປົກປ້ອງຜູ້ຢູ່ອາໄສຈາກ ການເຮັດໃຫ້ຕົນເອງເຈັບ ຫລື ການເຮັດໃຫ້ຄົນອື່ນເຈັບ.

## ການຮ້ອງທຸກ

ຜູ້ຢູ່ອາໄສຈະຖືກສົ່ງເສີມແລະຊ່ວຍເຫຼືອ, ຕະຫຼອດລະຍະເວລາພັກຢູ່ໃນ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Home ຫລື ໃນຊ່ວງປິ່ນປົວ, ເພື່ອທຳຄວາມເຂົ້າໃຈ ແລະ ນຳໃຊ້ສິດຂອງພວກເຂົາກໍຄືສິດຂອງຜູ້ຢູ່ອາໄສແລະສິດຂອງພົນລ

ະເມືອງ. ຜູ້ຢູ່ອາໄສອາດຮ້ອງທຸກ ແລະ ສະເໜີແນະໃຫ້ແກ່ພະນັກງານ ສະຖານພະຍາບານ Nursing Home ຫລື ສະຖານພະຍາບານຄົນສະລາແລະຄົນພິການ Boarding Care Homeແລະຜູ້ອື່ນໆທີ່ພວກເຂົາເລືອກ ກ່ຽວກັບການປະຕິຮູບ ນະໂຍບາຍ ແລະການບໍລິການຕ່າງໆ, ການລົບລ້າງ ຫລື ກໍາຈັດບັນຫາເຊັ່ນ: ການຈໍາກັດ, ການເຂົ້າຫຍຸ້ງກ່ຽວ, ການບີບບັງຄັບ, ການຈໍາແນກ ຫລື ການແກ້ແຄ້ນ, ລວມທັງການຂົ່ມຂູ່ເພື່ອຂັບໄລ່ອອກ. ອີງຕາມກົດໝາຍວ່າດ້ວຍການຊ່ວຍເຫຼືອຜູ້ສະລາ (Older Americans Act), ມາດຕາ 307(a)(12).

ໃບແຈ້ງການກ່ຽວກັບຂັ້ນຕອນການຮ້ອງທຸກຂອງ ສະຖານທີ່ພັກເຊົາຟື້ນຟູສຸຂະພາບ Facility ຫລື ໂປຣແກຣມ, ກໍຄືທີ່ຢູ່ແລະເບີໂທລະສັບສໍາລັບຫ້ອງການຮ້ອງທຸກສະຖານທີ່ຟື້ນຟູສຸຂະພາບ (the Office of Health Facility Complaints) ແລະຜູ້ກວດສອບການຮ້ອງທຸກ ເຂດສໍາລັບ ການເບິ່ງແຍງລະຍະຍາວ ຈະຖືກປະກາດອອກໃນບ່ອນທີ່ເຫັນໄດ້ຊັດເຈນ.

# ຊັບພະຍາກອນ

**(ຫ້ອງການຮ້ອງທຸກຕໍ່ກັບສະຖານພະຍາບານ
ການເບິ່ງແຍງສຸຂະພາບ)**

**OFFICE OF HEALTH FACILITY COMPLAINTS**

PO Box 64970
St. Paul, MN 55164-0970
(800) 369-7994 ຫລື (651) 201-4200 (ລົດໄຟໃຕ້ດິນ metro)

**(ຜູ້ກວດກາຄໍາຮ້ອງທຸກ ສໍາລັບ ການເບິ່ງແຍງໄລຍະຍາວ)**

**OMBUDSMAN FOR LONG-TERM CARE**

PO Box 64971
St. Paul, MN 55164-0971
(800) 657-3591 ຫລື (651) 431-2555 (ລົດໄຟ metro)

**(ພະແນກສາທາລະນະສຸກ ມິນນີໂຊຕາ)**

**MINNESOTA DEPARTMENT OF HEALTH**

(ໜ່ວຍງານຄວບຄຸມວຽກສາທາລະນະສຸກ)
Health Regulation Division
PO Box 64900
St. Paul, MN 55164-0900
(651) 201-4101

## ສິດທິດ້ານການເບິ່ງແຍງລະຍະສຸດທ້າຍຂອງຜູ້ຢູ່ອາໄສ

**(ໂຄງການສະໜັບສະໜູນສະຖານດູແລຄົນພິການທາງສະໝອງ)**
**THE DEVELOPMENTALLY DISABLED ADVOCACY PROJECT**
(ໂຄງການກົດໝາຍສຸຂະພາບທາງຈິດ)
The Mental Health Law Project
430 First Avenue North, Suite 300
Minneapolis, MN 55401-1780
(800) 292-4150 ຫລື (612) 332-1441 (ລົດໄຟ metro)

**(ການບໍລິການ ການກວດຕິດຕາມ ແລະ ທົບທວນດ້ານຄວາມຊື່ສັດ)**
**SURVEILLANCE & INTEGRITY REVIEW SERVICES**
**(ຫ້ອງການ Medicaid ສໍາລັບເລື້ອງ ການຫລອກລວງ ແລະ ການຂົ່ມເຫງ - ບັນຫາດ້ານການຊໍາລະເງິນ)**
**Minnesota Department of Human Services**
PO Box 64982
St. Paul, MN 55164-0982
(800) 657-3750 ຫລື (651) 431-2650 (ລົດໄຟ metro)

(ພະແນກສາທາລະນະສຸກມິນີໂຊຕາ, ການອອກໃບອະນຸຍາດແລະການຢັ້ງຢືນ)
Minnesota Department of Health
Licensing and Certification
PO Box 64900, St. Paul, MN 55164
651-201-4101
health.fpc-licensing@state.mn.us
www.health.mn.us

ວັນທີ: 4 ທັນວາ 2015

ຮັບຂໍ້ມູນນີ້ໃນຮູບແບບຕ່າງໆ, ກະລຸນາໂທ:
651 201-4101